ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2053 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 30 ກັນຍາ 2022

# ແຈ້ງການ

ເຖິງ : ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ແລະ ຫ້ອງການ ອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ໃນຂອບເຂດທົ່ວປະເທດ

ເລື່ອງ : ການເກັບຄ່າທຳນຽມອອກໃບທະບຽນວິສາຫະກິດ ແລະ ຄ່າບໍລິການກ່ຽວກັບທະບຽນວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020.

ເພື່ອຄວາມເປັນເອກະພາບ ແລະ ຮັບປະກັນ ໃນການເກັບຄ່າທຳນຽມອອກໃບທະບຽນວິສາຫະກິດ ແລະ ຄ່າບໍລິການ ກ່ຽວກັບທະບຽນວິສາຫະກິດ ຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ໃຫ້ຄົບຖ້ວນ ແລະ ປະກອບສ່ວນເຂົ້າງົບປະມານຂອງລັດຢ່າງທັນການ, ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ເກັບຄ່າທຳນຽມ ອອກໃບທະບຽນວິສາຫະກິດ ຕາມມູນຄ່າຂອງທຶນຈົດທະບຽນວິສາຫະກິດ ແລະ ຄ່າບໍລິການກ່ຽວກັບທະບຽນວິສາຫະກິດ ກ່ອນການອອກໃບທະບຽນວິສາຫະກິດ ໂດຍໃຫ້ເກັບໃນມື້ທີ່ເອກະສານແຈ້ງຂຶ້ນ ຫຼື ປ່ຽນແປງເນື້ອໃນທະບຽນວິສາຫະກິດ ຖືກຕ້ອງ ແລະ ຄົບຖ້ວນ.

2. ການເກັບຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວ ຕ້ອງມີໃບຮັບເງິນ ຕາມແບບພິມຂອງຂະແໜງການເງິນ ໃຫ້ວິສາຫະກິດ ທຸກຄັ້ງ;

3. ການເກັບຄ່າທຳນຽມອອກໃບທະບຽນວິສາຫະກິດ ແລະ ຄ່າບໍລິການກ່ຽວກັບທະບຽນວິສາຫະກິດ ແມ່ນໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ວັນທີ 03 ຕຸລາ 2022 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ວິຍູນ ສິດທິບໍລະດາ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ພະແນກບໍລິການຂຶ້ນທະບຽນວິສາຫະກິດ ໂທລະສັບ 021 412011